# 10 ເຫດຜົນທີ່ດີ ໃນການໄປສຶກສາ ຢູ່ປະເທດຝຣັ່ງ



CAMPUS FRANCE
campusfrance.org
LAOS

campusfrance@if-laos.org **020 59 04 15 30** Institut Français du Laos **CAMPUS FRANCE LAOS**

## #01 ຄຸນນະພາບການ ສຶດສອນຂັ້ນສູງດີເລີດ

ມີເຄືອຂ່າຍສະຖາບັນການສຶດສອນຂັ້ນສູງຂອງລັດ ແລະ ເອກະຊົນ ໃນທຸກຂະແໜງການ ຈຳນວນ 3 500 ແຫ່ງ.

## #02 ທຸກຄົນສາມາດເຂົ້າຮຽນໄດ້

ປະເທດຝຣັ່ງຊ່ວຍຮັບຜິດຊອບຄ່າໃຊ້ຈ່າຍໃນການສຶກສາຂອງທ່ານ ໃນສະຖາບັນການສຶກສາຂອງລັດ ສູງເຖິງ 14 000 ເອີໂຣ ຕໍ່ປີ. ທ່ານຮັບຜິດຊອບແຕ່ຄ່າລົງທະບຽນຮຽນຢ່າງດຽວເທົ່ານັ້ນ.

## #03 ເປັນປະເທດຈຸດໝາຍປາຍ ທາງທີ່ຊາວໜຸ່ມໃຫ້ຄວາມສົນໃຈ

ປະເທດຝຣັ່ງຖືກຈັດເປັນອັນດັບທີ4ຂອງໂລກທີ່ມີນັກສຶກສາຕ່າງ ປະເທດມາຮຽນຈຳນວນຫຼາຍຊຶ່ງໃນແຕ່ລະປີ ມີຫຼາຍກວ່າ 300 000 ຄົນ.

## #04 ຊີວິດການເປັນຢູ່ສະດວກສະບາຍ

ປະເທດຝຣັ່ງຖືກຈັດເປັນອັນດັບໜຶ່ງຂອງຈຸດໝາຍ ປາຍທາງການທ່ອງທ່ຽວໃນໂລກ ແລະ ມີຫຼາຍກວ່າ 50 ເມືອງທີ່ດີທີ່ສຸດສຳ ລັບການສຶກສາຂັ້ນມາຫາວິທະຍາໄລ.

## #05 ກິດຈະກຳດ້ານ ວັດທະນະທຳທີ່ຫຼາກຫຼາຍ

ມີໂຮງສາຍຮູບເງົາ 2 000 ແຫ່ງ, ມີງານເທດສະການ ຕ່າງໆ 500 ງານ, ມີຫໍພິພິດຕະພັນ ແລະ ສະຖານທີ່ ດ້ານວັດທະນະທຳທີ່ໂດດເດັ່ນ ຈຳນວນ 8 000 ແຫ່ງ : ການທີ່ໄດ້ໃຊ້ຊີວິດຢູ່ປະເທດຝຣັ່ງ ທ່ານຈະໄດ້ຮຽນຮູ້ ແລະ ໄດ້ປະສົບການຫຼາຍສິ່ງຫຼາຍຢ່າງໃນຊີວິດປະຈຳວັນ.

## #06 ຝຣັ່ງເປັນປະເທດມະຫາອຳນາດດ້ານ ເສດຖະກິດລະດັບໂລກ

ປະເທດຝຣັ່ງເປັນປະເທດມະຫາອຳນາດດ້ານເສດຖະກິດ ອັນດັບທີ 2 ຂອງເອີຣົບ, ເປັນຕະຫຼາດໃຫຍ່ອັນດັບສອງຂອງເອີຣົບ ແລະ ເປັນປະເທດມະຫາອຳນາດດ້ານເສດຖະກິດອັນດັບທີ6ຂອງໂລກ.

## #07 ມີເຄືອຂ່າຍບໍລິສັດທີ່ເຂັ້ມແຂງ

ປະເທດຝຣັ່ງມີສະພາບແວດລ້ອມທີ່ເໝາະສົມສຳລັບຜູ້ປະກອບການ ມືໃໝ່ ແລະ ໃນຈຳນວນ 500 ບໍລິສັດແຖວໜ້າຂອງໂລກ ມີບໍລິສັດຝຣັ່ງ ຈຳນວນ 31 ບໍລິສັດ.

## #08 ມີສະພາບແວດລ້ອມທີ່ເໝາະສົມ ຕໍ່ການປະດິດນະວັດຕະກຳໃໝ່ໆ

ປະເທດຝຣັ່ງເປັນປະເທດທຳອິດຂອງເອີຣົບທີ່ຖືກຈັດຢູ່ໃນ 100 ບໍລິສັດທີ່ດີທີ່ສຸດດ້ານນະວັດຕະກຳ.

## #09 ການຄົ້ນຄວ້າລະດັບສູງ

ປະເທດຝຣັ່ງມີຜູ້ທີ່ຈົບປະລິນຍາເອກຫຼາຍກວ່າ 75 000 ຄົນ ໃນທຸກຂະແໜງການ. 41% ແມ່ນນັກສຶກສາຕ່າງປະເທດ.

## #10 ພາສາຝຣັ່ງ ເປັນພາສາສາກົນ

ພາສາຝຣັ່ງຖືກນຳໃຊ້ຫຼາຍອັນດັບທີ 5 ຂອງໂລກ ແລະ ນຳໃຊ້ຫຼາຍອັນດັບທີ 3 ໃນຂະແໜງທຸລະກິດ;ພາສາຝຣັ່ງເປັນ ພາສາສາກົນທີ່ມີຄົນຮຽນຫຼາຍທີ່ສຸດ ຖັດຈາກພາສາອັງກິດ.